# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 30 ພຶສຈິກາ 2008 (11-30-2008)

## <u>ພັນທະກິດທີ່ຂ້າພະເຈົ້າກຳລັງຮັບໃຊ້ຢູ່:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ໂຣມ 15:14-21, 30-33; 16:25-27)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ບົດຮຽນນີ້ຈະຊ່ວຍທ່ານໃຫ້ຈຸດສົນໃຈເຮົາໃນແຜນການເດີນທາງປ່າວປະກາດຂ່າວປະເສີດຂອງທ່ານໂປໂລ. ການອ້ອນວອນຂອງທ່ານໂປໂລຕໍ່ຜູ້ທີ່ເຊື່ອເພື່ອໃຫ້ອະທິຖານເພື່ອໃຫ້ພົ້ນພັຍອັນຕລາຍໃນການເດີນທາງ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:</u>**

ຍັງມີຄຣິສຕຽນຫລາຍຄົນບໍ່ເຂົ້າໃຈກັບການຊົງເປີດເຜີຍພຣະທັມແຫ່ງຄວາມຈິງຂອງພຣະເຈົ້າໃນຊີວິດຂອງເຂົາເຈົ້າ. ພວກເຂົາເຈົ້າ “ເຂົ້າໃຈ“ ວ່າ ການນະມັສການ, ຫລືການສັຣເສີນພຣະເຈົ້າໃນເຊົ້າວັນອາທິດນັ້ນເປັນຜົນດີສຳລັບການເປັນພຍານກ່ຽວກັບພຣະເຈົ້າ. ເຫດວ່າພວກເຂົາເຈົ້າກຳລັງນະມັສການພຣະເຈົ້າຜູ້ທີ່ຊົງປະທານພຣະບຸດຂອງພຣະອົງໃຫ້ທຳພາຣະກິຈທຸກຢ່າງເພື່ອເຂົາທັງຫລາຍຈົ່ງສຳເຣັດຜົນ. ພວກເຂົາເຈົ້າຕ້ອງການເຮັດຢູ່ສອງຢ່າງຄື: 1)- ຍ້ອງຍໍສັຣເສີນພຣະເຈົ້າຮ່ວມກັນຢູ່ໃນຄຣິສຕະຈັກ. 2)- ຮ່ວມມືກັນກັບອົງພຣະຜູ້ເປັນເຈົ້າໃນການທຳງານຂອງພຣະອົງໃນໂລກນີ້.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**

ບົດຮຽນນີ້ ສາມາດຊ່ວຍໃຫ້ທ່ານເຮັດແຕ່ລະຂັ້ນຕອນໃນການປັບປຸງຂອງຂໍ້ຂາດຕົກບົກພ່ອງໃນຊີວິດຂອງທ່ານໃນການນະມັສການ ແລະການເປັນພຍານ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ
6. ໃຫ້ນັກຮຽນເວົ້າຄຳພະຍານຈາກປະສົບການໃນອາທິດທີ່ຜ່ານມາສັ້ນໆ.

**<u>ແນະນຳ</u>**: ນຳພານັກຮຽນສົນທະນາກ່ຽວກັບຂໍ້ແກ້ຕົວຕ່າງ ໆ ຂອງບັນດາຜູ້ທີ່ເຊື່ອທີ່ບໍ່ຢາກແບ່ງປັນຄວາມເຊື່ອທີ່ໃຊ້ກັນໃນສມັຍທຸກວັນນີ້. ໃຫ້ສືບຕໍ່ການໂອ້ລົມກັນດ້ວຍການເວົ້າເຖິງຕົວຂອງພວກເຮົາດ້ວຍ, ທີ່ບໍ່ຄຳນຶງເຖິງການ

ທີ່ເອີ້ນວ່າແຜ່ຂະຍາຍພຣະຄຳຂອງພຣະເຈົ້າອອກໄປໃຫ້ທົ່ວຂອງພວກເຮົາທີ່ຜ່ານມາ. ອະທິບາຍເຖິງການປະກາດຂອງທ່ານໂປໂລທີ່ແຜ່ຂະຍາຍອອກໄປເຖິງຜູ້ທີ່ເຊື່ອທັງຫລາຍ ແລະເຖິງຜູ້ທີ່ບໍ່ເຄີຍໄດ້ຍິນຢ່າງໃດ.

**1. <u>ການປະກາດຂ່າວປະເສີດ:</u>** (ໂຣມ 15:14-21)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 15:14-21
- ແນະນຳໃຫ້ນັກຮຽນທົບທວນເຖິງຂໍ້ພຣະທັມຕ່າງ ໆ ຕາມລຳພັງ ແລະບອກກິຈກຳທີ່ແຕກຕ່າງກັນທີ່ທ່ານໂປໂລໄດ້ເວົ້າເຖິງທັງສອງຢ່າງ (ເຊັ່ນການໜູນໃຈ ແລະການນຳພາ) ແລະນອກຈາກໂບດ (ເຊັ່ນ ການອັສຈັນ ແລະການປະກາດຂ່າວປະເສີດ).
- ໃນຂໍ້ທີ 18 ຍອມຮັບວ່າເຄື່ອງດົນຕຣີນັ້ນເປັນການໃຊ້ໂດຍພຣະເຈົ້າ. ເຄື່ອງດົນຕຣີຈະບັນເລງບໍ່ໄດ້ນອກຈາກຈະມີຄົນຫລິ້ນມັນ. ໂບດໝົດທຸກໂບດດີທຸກຢ່າງບໍ່?
- ຊີ້ໃຫ້ເຫັນປໂຍກທີ່ວ່າ “ ຈຸດປະສົງຂອງຂ້າພະເຈົ້າ.....(ຂໍ້ 16) ແລະການເປັນ...........ຂອງຂ້າພະເຈົ້າ (ຂໍ້ 20) ສະແດງໃຫ້ເຫັນວ່າພຣະເຈົ້າໄດ້ມີພຣະປະສົງໃຫ້ທ່ານໂປໂລມີເປົ້າໝາຍໃຫ້ຜູ້ທີ່ເຊື່ອ ແລະຜູ້ບໍ່ເຊື່ອໄດ້ເຫັນພຣະປະສົງຂອງພຣະຜູ້ເປັນເຈົ້າ.
- ຊີ້ໃຫ້ເຫັນເຖິງເປົ້າໝາຍຂອງທ່ານໂປໂລອັນນຶ່ງທີ່ເຮັດໃຫ້ພວກຄົນຕ່າງຊາດໄດ້ເຊື່ອຟັງ (ຂໍ້ທີ່ 18) ແລະເພື່ອໃຫ້ສຳເຣັດໂດຍການອ້າງເຖິງຫລັກຖານຂອງພຣະເຈົ້າທີ່ມີພລັງໃນຕົວຂອງທ່ານໂປໂລເອງ

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ໂຣມ 15:14-21)

1. ທ່ານໂປໂລເປັນຜູ້ທີ່ສຳຄັນຜູ້ນຶ່ງບໍ່ທີ່ພຣະເຈົ້າຊົງໃຊ້ລາວ? ເປັນດ້ວຍເຫດໃດທ່ານຈຶ່ງເປັນຜູ້ສຳຄັນສຳລັບພຣະເຈົ້າໃນຊີວິດຂອງທ່ານ?
2. ທ່ານຄິດວ່າແມ່ນໃຜທີ່ທ່ານໂປໂລເວົ້າເຣື່ອງຄົນທີ່ຍັງບໍ່ເຄີຍອອກພຣະນາມຂອງພຣະຄຣິດຈັກເທື່ອ (ຂໍ້ທີ່ 20)? ຢູ່ໃນເຂດທີ່ທ່ານຢູ່ມີຄົນທີ່ເຄີຍໄດ້ຍິນນາມຊື່ຂອງພຣະຄຣິດ ແຕ່ບໍ່ຮູ້ວ່າພຣະອົງເປັນໃຜແທ້? ທ່ານຈະຕ້ອງເຮັດແນວໃດເພື່ອໃຫ້ເຂົາເຈົ້າໄດ້ຮູ້ ແລະເຂົ້າໃຈ?

**2. <u>ອະທິຖານເພື່ອຄວາມສຳເຣັດ:</u>** (ໂຣມ 15:30-33)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 15:30-33
- ພຣະທັມຕອນນີ້ ທ່ານໂປໂລໄດ້ຂໍໃຫ້ບັນດາຜູ້ທີ່ເຊື່ອອະທິຖານສຳລັບສິ່ງເຫລົ່ານີ້: (1) ການປົກປ້ອງຄຸ້ມຄອງ (ຂໍ້ 31) (2) ນຳເອົາອຸປສັກອອກໄປ (ຂໍ້ 31) ແລະ (3)ຄວາມສຳເຣັດໃນພາຣະກິດຂອງພຣະອົງ (ຂໍ້ 32). ໃຫ້ຂຽນທັງສາມປໂຍກນີ້ໃສ່ໃນກະດານ. ການເຂົ້າໃຈກິຈການງານຂອງພຣະອົງພວກເຮົາກໍຈະອະທິຖານສຳລັບເຣື່ອງນີ້ໄດ້.
- ຄຳວ່າຢ່າລືມການອະທິຖານນັ້ນມີຄວາມໝາຍແນວໃດ (ຂໍ້ 30) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກແບ່ງປັນໃນເວລາທີ່ລາວຕົກຢູ່ໃນບັນຫາເຊັ່ນນີ້ທີ່ການອະທິຖານຂອງລາວຍັງຢູ່ໃນຄວາມຊົງຈຳ ເພາະດ້ວຍວ່າມີຄວາມໝົດຫວັງຕໍ່ບັນຫານີ້.
- ໃຫ້ນັກຮຽນເຂົ້າໃນວ່າພວກເຮົາຍັງຈະຕ້ອງໄດ້ພຍາຍາມຂຍັນພາກພຽນຫລາຍຂຶ້ນກວ່າເກົ່າ ໃນເຣື່ອງການອະທິຖານນີ້. ເມື່ອໃດຫາກພວກເຮົາຫາກເຂົ້າໃຈໃນການອະທິຖານ ແລ້ວພຣະເຈົ້າຈະໃຫ້ເຮົາເຂົ້າໃຈໃນເຣື່ອງຣາຊອານາຈັກແຜ່ນດິນສວັນຂອງພຣະອົງ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ໂຣມ 15:30-33

1. ພຣະທັມທີ່ທ່ານຮຽນແຕ່ລະມື້ໄດ້ຊ່ອຍໃຫ້ທ່ານອ້ອນຕໍ່ພຣະເຈົ້າຫລາຍຂຶ້ນບໍ່?
2. ເປັນຫຍັງຍາງເທື່ອພຣະເຈົ້າບໍ່ຕອບການອະທິຖານຂອງພວກເຮົາ, ບໍ່ປົກປ້ອງເຮົາ, ບໍ່ເອົາສິ່ງຊົ່ວຮ້າຍ ຫລືບໍ່ໃຫ້ເຮົາໄດ້ສຳເຣັດຜົນຕາມພຣະປະສົງຂອງພຣະອົງ?. (ສິ່ງທີ່ຄວນພິຈາຣະນາເບິ່ງນັ້ນກໍຄື: ປະຫວັດຂອງດານີເອນ ແລະຈອນບັບຕິສໂຕ.)

3. **<u>ສັຣເສີນພຣະເຈົ້າ:</u>** (ໂຣມ 16:25-27)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 16:25-27
- "ຣິດເດດ" ຂ່າວປະເສີດຂອງພຣະເຢຊູຄຣິດເຈົ້າຊຶ່ງປະກາດໂດຍພຣະອົງເອງ.
- ໜູນໃຈໃຫ້ນັກຮຽນມີຄວາມສົນໃຈຂໍ້ມູນສຳຄັນຕ່າງ ໆ ເຊັ່ນ: **ຄວາມສິດຊື່ນ ເຫລື້ອມໃສ** ແລະອື່ນ ໆທີ່ເປັນການດີ ເປັນການສັຣເສີນ ຂຽນຂໍ້ຄວາມເຫລົ່ານັ້ນໃສ່ກະດານ ແລ້ວໃຫ້ເວລານັກຮຽນແບ່ງປັນ ສົນທະນາກັນເຖິງເຣື່ອງທີ່ເຂົາເຈົ້າໄດ້ຂຽນເປັນລົດໄວ້ນັ້ນ.
- ຄຳຖາມ: ການມອງເຫັນຂອງຜູ້ທຳນວາຍໃນພຣະທັມທີ່ເຕັມໄປດ້ວຍຄວາມດີໃຈ ແລະເຂົ້າໃຈເຣື່ອງຂອງພຣະເຈົ້າຂຶ້ນແນວໃດແດ່?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ໂຣມ 16:25-27

1. ຕາມທີ່ບັນທຶກໄວ້ໃນຂໍ້ທີ່ 25 ມີທາງໃດແດ່ທີ່ພຣະເຈົ້າໄດ້ຊົງເຮັດໃຫ້ທ່ານມີຄວາມເຂັ້ມແຂງຂຶ້ນ? (ຜ່ານທາງຂ່າວປະເສີດທີ່ທ່ານໂປໂລໄດ້ປະກາດນັ້ນບໍ່? ຫລືເຣື່ອງລາວຕ່າງ ໆ ຂອງພຣະເຢຊູຄຣິດເຈົ້າບໍ່?
2. ໃນຂະນະທີ່ພິຈາຣະນາຈິດຈໍ່ຢູ່ທີ່ສະຕິປັນຍາ ຄວາມຮອບຮູ້ຂອງພຣະເຈົ້າເທົ່ານັ້ນ (ຂໍ້ 27) ມີພຣະທັມອື່ນອີກບໍ່ທີ່ໃຫ້ສະຕິປັນຍາ?
3. ແມ່ນຫຍັງເປັນຈຸດປະສົງຂອງພວກຜູ້ທຳນວາຍ ແລະການກະທຳໃຫ້ສຳເຣັດໂດຍຜ່ານທາງພຣະເຢຊູຄຣິດ?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ບັນດາຜູ້ທີ່ເຊື່ອທຸກຄົນມີໜ້າທີ່ໃຫ້ປະກາດຂ່າວປະເສີດຜ່ານທາງການດຳເນີນຊີວິດ ແລະການເປັນພຍານໃຫ້ກັບຄົນອື່ນ.
- ການອະທິຖານມີຄວາມໝາຍສຳຄັນສຳລັບຄົນຢິວ ແລະຄົນຕ່າງຊາດໃນຣາຊອານາຈັກຂອງພຣະເຈົ້າ.
- ໄພ່ພົນຂອງພຣະເຈົ້າຈະຕ້ອງໄດ້ໃຊ້ເວລາສັຣເສີນພຣະເຈົ້າຢູ່ໃນຣາຊອານາຈັກຂອງພຣະອົງຕລອດໄປເປັນນິດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**